ຕາຕະລາງ 1. ທິດທາງຍຸດທະສາດແລະບູລິມະສິດໃນການລົງທຶນສຳລັບ CEPF ຢູ່ໃນອິນໂດຈີນ

| ທິດທາງຍຸດທະສາດ CEPF | ບູລິມະສິດໃນການລົງທຶນ CEPF |
|---|---|
| 1.ປົກປັກຮັກສາຊະນິດພືດ/ສັດ ທີ່ຖືກຮຸກຮານຢ່າງແຜ່ຫຼາຍ ຢູ່ໃນອິນໂດຈີນ ດ້ວຍການຫຼຸດຜ່ອນສິ່ງຮຸກຮານອັນຕົ້ນຕໍ | 1.1 ວິໄຈ ແລະ ສ້າງຄວາມປອດໄພໃຫ້ແກ່ຈຳນວນພືດ/ສັດ ທີ່ຖືກຮຸກຮານຢ່າງແຜ່ຫຼາຍ ຈາກການສະແຫວງຫາຜົນປະໂຫຍດເກີນຂອບເຂດ ແລະ ທາງການຄ້າທີ່ຜິດກົດໝາຍ. |
| | 1.2 ສົ່ງເສີມການເຜີຍແຜ່ຄວາມຮັບຮູ້ໃຫ້ແກ່ສາທາລະນະຊົນ ກ່ຽວກັບການສ້າງນະໂຍບາຍການຄ້າສັດປ່າໃນປະຈຸບັນ ແລະປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມຕ້ອງການໃນການບໍລິໂພກ ສັດຈຳນວນ 67 ຊະນິດ ທີ່ຖືກຮຸກຮານຢ່າງແຜ່ຫຼາຍ ແລະ ບັນດາຜະລິດຕະພັນຂອງພວກມັນ. |
| | 1.3 ສຳຫລວດເບິ່ງສະພາບ ແລະ ການແຜ່ກະຈາຍຂອງຊະນິດ ຕົ້ນໄມ້ທີ່ຖືກຮຸກຮານຢ່າງແຜ່ຫຼາຍ, ແລະນຳໃຊ້ຜົນທີ່ໄດ້ຮັບ ເພື່ອວາງແຜນ, ຄຸ້ມຄອງ, ສ້າງຈິດສຳນຶກແລະ/ຫຼື ເຜີຍແຜ່ອອກໄປຢ່າງກວ້າງຂວາງ |
| | 1.4 ປະເມີນສະພາບທີ່ເປັນອຸປະສັກຕໍ່ກັບແຫລ່ງນ້ຳຈືດ ທີ່ໄດ້ຖືກຄັດເລືອກ ແລະ ຮວບຮວມຜົນ ດັ່ງກ່າວເພື່ອໃຊ້ເຂົ້າໃນຂະບວນການວາງແຜນໃນການອະນຸລັກຊີວະນາໆພັນທີ່ອາໃສ່ຢູ່ໃນເຂດດິນແມ່ນ້ຳຂອງທີ່ເປັນເຂດດິນຫລົ່ມ ຕະຫລອດເຖິງສາຂາຕົ້ນຕໍແມ່ນ້ຳດັ່ງກ່າວ. |
| | 1.5 ດຳເນີນຄົ້ນຄວ້າຈຳນວນສັດ 12 ຊະນິດ ທີ່ມີຄວາມຈຳເປັນຈະຕ້ອງ ໄດ້ມີການປັບປຸງຂໍ້ມູນທີ່ສຳຄັນກ່ຽວກັບສະຖານະພາບແລະການແຜ່ກະຈາຍຂອງພວກມັນ. |
| | 1.6 ຈັດພິມເອກະສານອ້າງອີງເປັນພາສາທ້ອງຖິ່ນ ກ່ຽວກັບຊະນິດພືດ/ສັດ ທີ່ຖືກຮຸກຮານຢ່າງແຜ່ຫຼາຍ. |
| 2. ສ້າງວິທີການໃນຮູບແບບລິເລີ່ມ, ໂດຍນຳໃຊ້ວິທີການຄຸ້ມຄອງໃນບໍລິເວນພື້ນທີ່ໃນເຂດສະຫງວນທາງດ້ານຊີວະນາໆພັນຈຳນວນ 28 ແຫ່ງທີ່ສຳຄັນ | 2.1 ຈັດຕັ້ງການລິເລີ່ມຄຸ້ມຄອງການອະນຸລັກ ໂດຍອີງໃສ່ຄູ່ຮ່ວມປະຕິບັດວຽກງານເປັນຫຼັກ ແລະ ລິເລີ້ມເອົາໃຈໃສ່ໃນຈຳນວນ 28 ເຂດພື້ນທີ່ສະຫງວນທາງດ້ານຊີວະນາໆ ພັນທີ່ສຳຄັນ. |
| | 2.2 ພັດທະນາມາດຕະຖານ ແລະແຜນງານ ຂອງພາກພື້ນ ເພື່ອແກ້ໄຂການສະແຫວງຫາຜົນປະໂຫຍດເກີນຂອບເຂດ ທາງດ້ານຊີວະນາໆພັນ ແລະທົດລອງແຜນງານ ຢູ່ສະຖານທີ່ ທີ່ໄດ້ຄັດເລືອກໄວ້. |
| 3. ຮວບຮວມເອົາຜູ້ຈັດຕັ້ງປະຕິບັດທີ່ສຳຄັນເຂົ້າກັນເພື່ອຈຸດປະສົງໃນການເຮັດວຽກຮ່ວມກັນດ້ານການອະນຸລັກຊີວະນາໆພັນ ແລະ ການພັດທະນາ ໂດຍເນັ້ນໜັກໃສ່ເຂດພື້ນທີ່ຜາຫີນເນີນສູງທີ່ຢູ່ທາງພາກເໜືອ, ແມ່ນ້ຳຂອງ ແລະ ບັນດາສາ | 3.1 ສົ່ງເສີມ ຄວາມພະຍາຍາມຂອງສັງຄົມ ໃນການວິໄຈນະໂຍບາຍພັດທະນາ, ແຜນງານ ແລະໂຄງການ, ປະເມີນຜົນກະທົບຂອງພວກເຂົາ ຕໍ່ກັບການບໍລິການທາງດ້ານຊີວະນາໆພັນ ແລະລະບົບນິເວດວິທະຍາ,ແລະ ສະເໜີທາງເລືອກ ກ່ຽວກັບການພັດທະນາ ແລະມາດຕະການຫຼຸດຜ່ອນ ທີ່ເໝາະສົມ. |
| | 3.2 ຊຸກຍູ້ແນວຄວາມຄິດລິເລີ້ມ ໃນການສະໜັບສະໜູນການອະນຸລັກຊີວະນານາພັນ ຂອງໂຄງການ ແລະແຜນງານການພັດທະນາຕ່າງໆ. |

| | |
|---|---|
| **ຂາທີ່ສຳຄັນຂອງພວກມັນ.** | 3.3 ຕັ້ງເປົ້າໝາຍເພື່ອຂະຫຍາຍ ແລະສ້າງຄວາມຮັບຮູ້ ໃຫ້ແກ່ນັກຂ່າວໜັງສືພິມ ແລະນັກກົດໝາຍ. |
| **4. ສະໜອງຍຸດທະສາດທີ່ເປັນການນຳ ແລະ ການປະສານງານທີ່ມີປະສິດທິຜົນຂອງການລົງທຶນ CEPF ໃຫ້ແກ່ທີມງານຈັດຕັ້ງປະຕິບັດໃນຂົງເຂດພາກພື້ນ.** | 4.1 ສ້າງຕັ້ງຄະນະຄັດເລືອກ ກຸ່ມປະຕິບັດວຽກງານ ໃນຂອບເຂດທາງດ້ານການເມືອງ ແລະຂະນົບທຳນຽມປະເພນີ ເພື່ອບັນລຸໄປສູ່ການປຶກສາຫາລື ກ່ຽວກັບເປົ້າໝາຍ ທີ່ລະບຸໄວ້ໃນບົດສະເໜີຂອງລະບົບນິເວດວິທະຍາສະບັບນີ້ ຮ່ວມກັນ. |